ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 6:
## The Epic Story of "Thao Hung - Thao Cheuang"

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ

**ລະຫັດ:** 0907409

**ບົດທີ 6:** ມະຫາກາບເລື່ອງ "ທ້າວຮຸ່ງ-ທ້າວເຈືອງ" (ຕໍ່) ເວລາ: 90 ນາທີ

**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ

**ປີ:** 3

**ພາກຮຽນ:** 2

**ສົກຮຽນ:** 2022-2023

| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desired Results)** | |
|---|---|
| **ສ້າງເປົ້າໝາຍ (Goal):**<br>ນັກຮຽນຈະຮູ້:<br>- ວ່າດ້ວຍຄວາມສຳຄັນຂອງມະຫາກາບທ້າວຮຸ່ງ-ທ້າວເຈືອງ<br>- ຄວາມຍິ່ງໃຫຍ່ມະຫັດສະຈັນທາງດ້ານສິລະປະການປະພັນ<br>- ຄວາມຍິ່ງໃຫຍ່ທາງດ້ານຂໍ້ມູນປະຫວັດສາດ<br>- ຄວາມຍິ່ງໃຫຍ່ທາງດ້ານວັດທະນະທຳ-ປະເພນີຮີດຄອງ | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ວ່າດ້ວຍຄວາມສຳຄັນຂອງມະຫາກາບທ້າວຮຸ່ງ-ທ້າວເຈືອງ<br>- ຄວາມຍິ່ງໃຫຍ່ມະຫັດສະຈັນທາງດ້ານສິລະປະການປະພັນ<br>- ຄວາມຍິ່ງໃຫຍ່ທາງດ້ານຂໍ້ມູນປະຫວັດສາດ<br>- ຄວາມຍິ່ງໃຫຍ່ທາງດ້ານວັດທະນະທຳ-ປະເພນີຮີດຄອງ | **ຄຳຖາມຫຼັກ (Questions):**<br>1) ມະຫາກາບທ້າວຮຸ່ງ-ທ້າວເຈືອງມີຄວາມສຳຄັນແນວໃດ?<br>2) ມະຫາກາບທ້າວຮຸ່ງ-ທ້າວເຈືອງມີການປະພັນແນວໃດ?<br>3) ເລື່ອງທ້າວຮຸ່ງ-ທ້າວເຈືອງຕິດພັນກັບປະຫວັດສາດແນວໃດ?<br>4) ເລື່ອງທ້າວຮຸ່ງ-ທ້າວເຈືອງຕິດພັນກັບວັດທະນະທຳ-ປະເພນີແນວໃດ? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງຄວາມສຳຄັນຂອງມະຫາກາບເລື່ອງທ້າວຮຸ່ງ-ທ້າວເຈືອງ ແລະ ຄວາມຍິ່ງໃຫຍ່ທາງດ້ານສິລະປະ, ຂໍ້ມູນປະຫວັດສາດ ແລະ ວັດທະນະທຳປະເພນີຮີດຄອງ | **ທັກສະ (Skills):**<br>- ອະທິບາຍໄດ້ເຖິງຄວາມສຳຄັນ ແລະ ຄວາມຍິ່ງໃຫຍ່ດ້ານຕ່າງໆຂອງມະຫາກາບທ້າວຮຸ່ງ-ທ້າວເຈືອງ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ (Evidence)** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ |

| | |
|---|---|
| - ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | - ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮອມກິດຈະກຳ<br>- ຜົນການກວດວຽກບ້ານ |

**ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)**

- **ສື່ການສອນມີ:**

ປຶ້ມຕຳລາວິຊາວັນນະຄະດີລ້ານຊ້າງ, ປຶ້ມມະຫາກາບທ້າວຮຸ່ງ-ທ້າວເຈືອງ, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.

- **ກິດຈະກຳການຮຽນ**

**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

**I. ທວນຄືນບົດຮຽນເກົ່າ**

- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງຄວາມເປັນມາຂອງມະຫາກາບທ້າວຮຸ່ງ-ທ້າວເຈືອງໂດຍຫຍໍ້.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 3**

**ມະຫາກາບເລື່ອງ "ທ້າວຮຸ່ງ-ທ້າວເຈືອງ" (ຕໍ່)**

**3.2 ວ່າດ້ວຍຄວາມສຳຄັນຂອງມະຫາກາບທ້າວຮຸ່ງ-ທ້າວເຈືອງ** (10 ນາທີ)

<u>ກິດຈະກຳ 1:</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
    1) ມະຫາກາບທ້າວຮຸ່ງ-ທ້າວເຈືອງມີຄວາມສຳຄັນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (3 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (7 ນາທີ)

ໃນຄວາມໝາຍຂອງສັບຄຳວ່າ ມະຫາ ແປ່ວ່າ ຍິ່ງໃຫຍ່ ຫຼື ວ່າຄວາມຍິ່ງໃຫຍ່ນັ້ນເອງ, ຄືດັ່ງພວກເຮົາເຄີຍເວົ້າວ່າມະຫານະທີ, ມະຫາເສດຖີ, ມະຫາອຳນາດ ແລະ ອື່ນໆ.

ສ່ວນຄວາມໝາຍຄຳວ່າ ມະຫາກາບ ຢູ່ໃນນີ້ຈະຂໍເວົ້າບາງຄຳເຫັນຄຳວ່າ ກາບ ໃນແງ່ວັນນະຄະດີວ່າ: ກາບແມ່ນບົດປະພັນ, ບົດວັນນະຄະດີໜຶ່ງໆທີ່ໄດ້ປະເວັ້ນຕາມຫຼັກການຂອງການສຳພັດໃນຮູບແບບຂອງຄຳຮ້ອຍກອງ ຫຼື ກາບກອນນັ້ນເອງ. ເມື່ອໄດ້ສຶກສາຄົ້ນຄວ້າຕາມບົດຕົວຈິງນັ້ນແລ້ວກໍເປັນໄດ້ວ່າມະຫາກາບ ຫຼື ຄຳກອນໃນເລື່ອງທ້າວຮຸ່ງ - ທ້າວເຈືອງໃນສະບັບລິດຈະນາ ໂດຍມະຫາສີລາ ວິລາວົງ ແລະ ຈັດພິມໂດຍຄະນະກຳມະການວິທະຍາສາດສັງຄົມເມື່ອປີ 1988 ນັ້ນມັນເປັນເລື່ອງທີ່ໃຫຍ່ໂຕ ແລະ ມີຄຸນຄ່າອັນມະຫາສານທີ່ຈະຫາເລື່ອງອື່ນໆໃນປະເທດລາວມາປຽບທຽບໄດ້ຍາກ ແລະ ສົມກັບເປັນບົດວັນນະຄະດີມະຫາກາບຊັ້ນຍອດສະບັບໜຶ່ງສະບັບດຽວທີ່ມີຢູ່ໃນປະເທດລາວ. ມະຫາກາບທ້າວຮຸ່ງ-ທ້າວເຈືອງມີຄວາມຍາວເຖິງ 5.000 ກ່ວາບາດກອນ ຫຼື 20.000 ກວ່າວັກ (ແຖວກອນ).

ຄວາມຍິ່ງໃຫຍ່ໃນເລື່ອງນີ້ຈຶ່ງກາຍເປັນຄວາມຍິ່ງໃຫຍ່ໃນດ້ານຂໍ້ມູນກ່ຽວກັບປະຫວັດສາດ, ສັງຄົມ, ປະເພນີຮີດຄອງ ແລະ ກໍເປັນມູນມັງມໍລະດົກທາງດ້ານວັດທະນະທຳ, ວັນນະຄະດີ, ມະນຸດວິທະຍາ ແລະ ອື່ນໆທີ່ລ້ຳເລີດຂອງຊາດລາວ, ໃຫ້ຄົນຮຸ່ນໃໝ່ໄດ້ສຶກສາຮຽນຮູ້ທາງດ້ານພາບພົດສີສັນທີ່ອະມະຕະຫຼາຍຮູບແບບເຊິ່ງລວມທັງຮູບການໆປະພັນທີ່ຍິ່ງໃຫຍ່ອີກດ້ວຍ.

**3.2.1 ຄວາມຍິ່ງໃຫຍ່ມະຫັດສະຈັນທາງດ້ານສິລະປະການປະພັນ** (10 ນາທີ)

ກິດຈະກຳ 2:

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ມະຫາກາບທ້າວຮຸ່ງ-ທ້າວເຈືອງມີມີການປະພັນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (3 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (7 ນາທີ)

ມະຫາກາບທ້າວຮຸ່ງ-ທ້າວເຈືອງປະພັນເປັນກອນໃນສີ່ຮູບແບບເຊິ່ງໄລຍະຜ່ານມາບໍ່ປາກົດມີເລື່ອງໃດທີ່ສະແດງໃຫ້ເຮົາເຫັນວ່ານັກປະພັນມີຄວາມສາມາດໃນການສະແດງໂວຫານການປະພັນກາບກອນອອກຢ່າງສຸດສີມືແລະ ຍອດຢ້ຽມທີ່ສຸດ ແລະ ກໍເຫັນວ່າເລື່ອງນີ້ແຕກຕ່າງຄຳກາບກອນຂອງລາວຢູ່ເລື່ອງອື່ນໆຄື: ເລື່ອງແຕ່ງຖືກຕາມລະບຽບຄຳກາບວິຊຸມາລີໃນພາສາບາລີ ຫຼື ເອີ້ນວ່າ ກອນວິຊຸມາລີ.

**ກ. ຮູບແບບຂອງກອນວິຊຸມາລີ (ສາຍຟ້າແມບ)**

| | |
|---|---|
| ວ່າຈັກດັ້ນກົບຟ້າຍັງຝັ່ງ | ຈັກກະວານ |
| ຄືຄູ່ ຕົວຄັ່ງຄາວຄັ່ງຕາຍ | ຕົກໄມ້ |
| ໝູຈັກ ສິ່ງສະການໃຫ້ກຳຫວນ | ເຫັນປີກ |
| ນົກເລົ່າໄດ້ດູໜ້າ | ກໍໄຊ່ເຮົາ |
| ຕົກຄຶກເບື້ອງຫີນຝ່າຍ | ສະເທີນເຂີນ |
| ອາການເຂົ້າດັ່ງດຽວ | ຕູນີ້ |
| ຫວັງຈັກ ກົມກຽວຟື້ນກຳມາເກີນ | ໄກຫ່າງ |
| ຊັກຊ່ອງຊື້ວາຍໄດ້ | ແວ່ນໃຈ (ທ້າວຮຸ່ງ-ທ້າວເຈືອງ ເຫຼັ້ມ1:164) |

**ຂ. ຮູບແບບໂຄງ 5 ສຸພາບ (ໂຄງມັນທຸຄະຕິ)**

| | |
|---|---|
| ເປັນດັ່ງ ຫ້າງແຮ້ວຖືກ | ຕີນສານ |
| ພາຍສານຊັກ | ເຊືອກແຮ້ວ |
| ເປົ່ານານຂາດ | ເປັນບັ້ນ |
| ແຄ້ວແຄ້ວກ່າວ | ຄຳເມື່ອ |
| ເມື່ອນັ້ນ ໄມ້ຄ້ອນ | ເພື່ອລຳອອນ |
| ລົມອ່ອນ | ພັດກິ່ງສ້ອຍ |
| ຄອນໆ | ໃຈຕ່ຳຄ້ອຍ |
| ຄຳນ້ອຍ | ໃຜບໍ່ເຫັນ (ທ້າວຮຸ່ງ-ທ້າວເຈືອງ ເຫຼັ້ມ1:160) |

**ຄ. ຮູບແບບກອນວິຊຸມາລີ (ໂຄງ 4 ສຸພາບ)**

ດອກໜຶ່ງ ບານກ່ອນໄມ້ ທັງຫຼາຍ
ປິ່ນດອກເອົາມາທວາຍ ຮົ່ມກັ້ງ
ດອກໜຶ່ງເມື່ອລົມພາຍ ຜັນໜອກ
ບິນສູ່ແດນຟ້າຕັ້ງ ຕໍ່ພື້ນພາຍສາຍ(ທ້າວຮຸ່ງ-ທ້າວເຈືອງ ເຫຼັ້ມ1:143)

**ງ. ໂຄງມັນທຸກະຄະຕິ (ໂຄງກົບເຕັ້ນ)**

ອາບນໍ້າແຕ່ ພິການ ກ່ອນເຖິ້ນ
ພໍຂັດອານ ລູບລ້າງ
ຢູ່ນານຢຽວ ໝາວໜ່ວງ
ຢຽວກະດ້າງເມື່ອຍພອຍ ຖືຮູ້ດີ (ທ້າວຮຸ່ງ-ທ້າວເຈືອງ ເຫຼັ້ມ1:163)

**3.2.2 ຄວາມຍິ່ງໃຫຍ່ທາງດ້ານຂໍ້ມູນປະຫວັດສາດ** (10 ນາທີ)

<u>ກິດຈະກຳ 3:</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ:
  1) ເລື່ອງທ້າວຮຸ່ງ-ທ້າວເຈືອງຕິດພັນກັບປະຫວັດສາດແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (3 ນາທີ)
- ຄູນັກສຶກສາສະຫຼຸບຮ່ວມກັນ: ( 7ນາທີ)

ດັ່ງກ່າວມາແລ້ວໃນເບື້ອງຕົ້ນວ່າ ມາຫາກາບ ທ້າວຮຸ່ງ - ທ້າວເຈືອງ ເປັນໜັງສືພື້ນກ່ຽວກັບປະຫວັດ ສາດທີ່ໃຫ້ຂໍ້ມູນສຳຄັນໃນດ້ານສັງຄົມສະໄໝບູຮານ ບັນດາເຫດການທີ່ໄດ້ເກີດຂຶ້ນໃນສະໄໝປະຫວັດສາດໄດ້ບັນທຶກຢູ່ໃນເລື່ອງທ້າວຮຸ່ງ - ທ້າວເຈືອງນັ້ນມັນໄດ້ສອດຄ່ອງກັບສະພາບປະຫວັດສາດໃນລະຫວ່າງສະຕະວັດທີ VIII- XII ຂອງພວກຂອມທີ່ອາໃສຢູ່ຂອບແຜ່ນດິນອັນເປັນພື້ນປະເທດລາວໃນພາກໃຕ້ ແລະ ປະເທດອ້ອມຂ້າງນປັດຈຸບັນ. ການກ່າວເຖິງເວລາເຄື່ອນທັບສູ່ສະໜາມ, ຈາກເມືອງໜຶ່ງໄປຫາເມືອງໜຶ່ງເບິ່ງແລ້ວກໍຂຶ້ນກັບສະພາບພູມີຊາດຂອງຊົນຊາດສ່ວນນ້ອຍທີ່ຍັງດຳລົງຊີວິດຢູ່ເຊັ່ນ:ພວກຂ້າພາຍດຳ, ຂ້າພູທຸ່ມກໍຍັງຄົງຮັກສາເຊິ່ງຮີດຄອງປະເພນີຂອງຄົນເຫຼົ່ານັ້ນຢູ່ຈົນປັດຈຸບັນ.

ອັນໜຶ່ງແມ່ນເຮົາສຶກສາເບິ່ງຕາມເລື່ອງແລ້ວກໍເຫັນວ່າບັນດາຊື່ເມືອງ, ເຂດແດນ, ເຜົ່າຊົນ, ແລະ ອື່ນໆກໍເຫັນໄດ້ວ່າມັນຢູ່ໃນປະຫວັດຂອງຊົນຊາດຂອມຕະຫຼອດເຖິງຜູ້ນຳທ້ອງຖິ່ນກໍບອກແຈ້ງເຖິງຊົນຊາດຂອມ. ນອກຈາກນັ້ນກໍສະແດງອອກທາງດ້ານຮ່ອງຮອຍປະຫວັດສາດທີ່ສະແດງອອກໃນເລື່ອງເປັນຂໍ້ມູນທີ່ໜ້າເຊື່ອຖື.

**3.2.3 ຄວາມຍິ່ງໃຫຍ່ທາງດ້ານວັດທະນະທຳ-ປະເພນີຮີດຄອງ** (30 ນາທີ)

<u>ກິດຈະກຳ 4:</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ:
  1) ເລື່ອງທ້າວຮຸ່ງ-ທ້າວເຈືອງຕິດພັນກັບວັດທະນະທຳ-ປະເພນີແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (10 ນາທີ)

- ຄູນັກສຶກສາສະຫຼຸບຮ່ວມກັນ: (20 ນາທີ)

ມະຫາກາບທ້າວຮຸ່ງ-ທ້າວເຈືອງເປັນທີ່ຍອມຮັບວ່າເປັນເລື່ອງທີ່ໜ້າສຶກສາຄົ້ນຄວ້າວິໄຈເພາະເປັນເລື່ອງທີ່ມີຂໍ້ມູນຈະແຈ້ງ ແລະ ໃຫ້ລາຍລະອຽດດີພໍສົມຄວນທາງດ້ານວັດທະນະທຳ- ຮີດຄອງປະເພນີ, ແນວຄິດຈິດຕະສາດ, ຄ່ານິຍົມຊົມຊອບ, ນະໂຍບາຍການເມືອງການປົກຄອງ, ບົດບາດຂອງບັນດາທ້ອງຖິ່ນ ແລະ ປະຊາຊົນ, ຕະຫຼອດເຖິງສະພາບເສດຖະກິດໃນສະໄໝນັ້ນ ໄດ້ສະແດງບົດວັນນະກຳເລື່ອງນີ້ຢ່າງສະລັບຊັບຊ້ອນໄປດ້ວຍສີສັນເປັນຕົ້ນແມ່ນທາງດ້ານຮີດຄອງປະເພນີເຊິ່ງໄດ້ເລົ່າເຖິງການປະຕິບັດໃນການທຳບຸນຕ່າງໆ, ປະເພນີການເກີດ, ການແຕ່ງດອງ, ການໃຫ້ລາງວັນແກ່ແມ່ທັບ ແລະ ນັກຮົບທີ່ດີເດັ່ນຫຼັງຈາກການສູ້ຮົບກັນມາ ແລະ ອື່ນໆ. ນອກຈາກນັ້ນອັນທີ່ພິເສດກໍແມ່ນການເຊື່ອຖືຂອງຄົນບັນດາເຜົ່າໂດຍສະເພາະແມ່ນການເຊື່ອຖືຜີດ້ຳ - ຜີເຮືອນ, ຜີຟ້າ - ຜີແຖນ. ກ່ອນຈະໄປທ່ຽວ,ໄປເຂົ້າຖ້ຳ, ໄປຂໍສາວ, ໄປທຳສົງຄາມ ຫຼື ກັບມາແລ້ວກໍຕ້ອງມີການຂ້າສັດ. ມີເຫຼົ້າໄຫໃຫຍ່ແຊບໆ, ດອກໄມ້ ແລະ ອື່ນໆເພື່ອທຳພິທີບູຊາຜີຊຶ່ງກ່ອນອື່ນໝົດກໍຕ້ອງກ່າວເຖິງຜີດຳ (ຜີພໍ່ແມ່ຜູ້ຕາຍໄປ) ແລະ ຜີແຖນຢູ່ເມືອງຟ້າເພື່ອຊ່ວຍຄຸ້ມຄອງຮັກສາ. ມາຮອດດຽວນີ້ເຊິ່ງປະຊາຊົນລາວບາງທ້ອງຖິ່ນກໍຍັງປະຕິບັດຢູ່.

| | |
|---|---|
| ເຈົ້າຈິ່ງ ໃຫ້ຈ່າຊ້ອນເຮວຮີວ | ຄືວຄວາຍ |
| ພະລີກຳຜີໝູ່ກຳ | ເປັນດ້ຳ... |
| ເຈືອງຈິ່ງ ທວຍສາລີບອກບົນ | ບານດ້ຳ |
| ຊຸນຈອມມ້ຽນເມືອພົມ | ລົດຊົ່ວ ມາກິນ |
| ຄູນກ່ຳພ້າສອງກ້ຳ | ກໍ່ກອນ... (ທ້າວຮຸ່ງ-ທ້າວເຈືອງ ເຫຼັ້ມ1:179) |

ສ່ວນທາງດ້ານເສດຖະກິດສະແດງອອກບັນດາຜູ້ນຳທີ່ໃຫ້ເຄື່ອງຂອງບັນນາການ, ຂອງຕອນໃນເວລາໄປຢ້ຽມຢາມ,ໄປຫາກັນ, ການເອົາຄ່າດອງ ແລະ ອື່ນໆ ລ້ວນແຕ່ເປັນເງິນຄຳຈຳນວນຫຼວງຫຼາຍ.

| | |
|---|---|
| ພິເສດພ້ອມຄຸບເຄື່ອງ | ບັນນາການ |
| ມະຫານິນຄວນຄ່າຄຳ | ພັນກ້ອນ |
| ຮີງໆເຫຼື້ອມແສງປານ | ສຸລິເຍດ |
| ທັງທ່ອນຜ້າລາຍເອື້ອ | ຄ່າຄຳ... (ທ້າວຮຸ່ງ-ທ້າວເຈືອງ ເຫຼັ້ມ2:294) |

ຄ່ານິຍົມໃນສັງຄົມທີ່ສະແດງອອກໃນເລື່ອງນີ້ຈະເຫັນໄດ້ວ່າ ບັນດາເຊື້ອກະສັດຈະບໍ່ຄ່ອຍນິຍົມໃຫ້ຜູ້ໃດຜູ້ໜຶ່ງໄປແຕ່ງດອງກັບຄົນນອກຕະກຸນ ຫຼື ເຊື້ອສາຍອື່ນ, ສ່ວນຫຼາຍແລ້ວຈະໃຫ້ແຕ່ງດອກກັບຄົນໃນຕະກຸນ ຫຼື ພີ່ນ້ອງດຽວກັນ. ດັ່ງນັ້ນ, ຢູ່ໃນບົດວັນນະກຳເລື່ອງນີ້, ຕອນທີ່ກ່າວເຖິງເຈົ້າຊາຍແອງກາແຫ່ງເມືອງຄຳວັງສົ່ງສານໄປຂໍເຈົ້າຍິງອົ້ວຄາລູກຂອງພະຍາຂຸນຊຶ່ມຍັງຄິດເຖິງພີ່ນ້ອງວົງຕະກຸນ ແລະຈະໃຫ້ລູກສາວແຕ່ງດອງກັບທ້າວຮຸ່ງຜູ້ເປັນຫຼານຊາຍ, ສະພາບດັ່ງກ່າວຈຶ່ງກ້າວໄປເຖິງຍົກຕີກັນຢ່າງດຸດເດືອດ.

| | |
|---|---|
| ເມື່ອນັ້ນ ພະບາດຮູ້ຮັບພາກ | ສອງນາຍ |
| ອັນຈັກ ເປັນກົມກຽວຢ່າລອນ | ມາຕ້ານ |
| ຄຶດທີ່ ສາຍນາມເນື້ອຈອມໄທ | ທ້າວຮຸ່ງ ກູພູ້ນ |
| ພໍ່ພາກໄວ້ເມືອງບ້ານ | ຢູ່ພອຍ...(ທ້າວຮຸ່ງ-ທ້າວເຈືອງ ເຫຼັ້ມ1:209) |

ເຫັນໄດ້ວ່າຢູ່ໃນມະຫາກາບທ້າວຮຸ່ງ - ທ້າວເຈືອງທັງໝົດ 39 ຕອນຕາມການຈັດແບ່ງຂອງທ່ານ ມະຫາສິລາ ວິລາວົງ (ຜູ້ລິດຈະນາ) ມີການເຄົາລົບ, ປະພຶດປະຕິບັດຮີດຄອງປະເພນີອັນໜຶ່ງທີ່ຈຳເປັນນັ້ນກໍຄືການລ້ຽງຜີ, ຜີດ້ຳ-ຜີເຮືອນ, ເຊິ່ງສັງລວມໄດ້ດັ່ງນີ້:

1) ການລຽງຜີ, ການທຳພິທີການ, ການດູໝໍ, ການເບິ່ງຕີນໄກ່ ແລະ ຄາງໄກ່, ໃນການປະຕິບັດແຕ່ລະຄັ້ງກໍລ້ວນແຕ່ມີຈຸດປະສົງເປົ້າໝາຍແຕກຕ່າງກັນເຊັ່ນ: ການໄປຂໍສາວ, ກ່ອນຈະທຳສູຮົບ ແລະ ອື່ນໆ. ເຊິ່ງກ່າວໄວ້ໃນບາງຕອນຂອງເລື່ອງ, ພ້ອມນັ້ນບັນດາຜີທີ່ກ່າວມານີ້ກໍມີຫຼາຍປະເພດຕ່າງກັນ.

2) ການແຕ່ງດອງ, ການສູ່ຂໍຜູ້ສາວ, ການຕິດຕໍ່ຊູ້ສາວ,ການຊັ່ງແນນຄູ່ບ່າວສາວ, ຄວາມນິຍົມຊົມຊອບໃນການແຕ່ງດອງໃນວົງຄະນະຍາດດຽວກັນ.

3) ປະເພນີການເຕົ້າຂ່ວງ, ໄປທ່ຽວປ່າດົງ, ເຮົ້າຖ້ຳ, ການສ່ຽງຄູ່ບ່າວສາວ, ຖວາຍດອກໄມ້, ແກ່ວງຄ້ອນໃສ່ໜ້າກ້ອງ...

4) ການດຳເນີນເດັກ, ການຕ້ອນຮັບແຂກ, ການຖວາຍເຄື່ອງບັນນາການ.

5) ປະເພນີການໃຫ້ລາງວັນແກ່ແມ່ທັບນາຍກອງ, ນັກຮົບຫຼັງຈາກສູ້ຮົບຊະນະກັບມາແລ້ວ, ປະເພນີການແບ່ງປັນຊັບສິນ, ເຂດດິນບ້ານເມືອງ, ຂ້ອຍຂ້າ.

6) ປະເພນີການແຕ່ງຕົວເອ້ຍ້ອງເຊັ່ນ: ຜ້າແພ, ສິ້ນເສື້ອ, ເຄື່ອງເອ້, ການແຕ່ງໜ້າ, ການຊັ່ງແນນ.

7) ປະເພນີການຕັດຫົວສັດຕູໃນສະໜາມຮົບແລ້ວເອົາມາບູຊາ (ເອົາມາຕ້ອນ) ຜູ້ປົກຄອງເຈົ້າເມືອງ (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

**III. ຂັ້ນສະຫຼຸບ**

**ຄູເນັ້ນຈຸດສຳຄັນຂອງບົດຮຽນ**

- ຄວາມຍິ່ງໃຫຍ່ມະຫັດສະຈັນທາງດ້ານສິລະປະການປະພັນ
- ຄວາມຍິ່ງໃຫຍ່ທາງດ້ານຂໍ້ມູນປະຫວັດສາດ
- ຄວາມຍິ່ງໃຫຍ່ທາງດ້ານວັດທະ ນະທຳ-ປະເພນີຮີດຄອງ

**IV. ວັດ ແລະປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄາຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄາຕອບ ແລະ ສະຫຼຸບຄືນ

**V. ຂັ້ນຕັກເຕືອນ**

- ຄູແນະນານັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**ເອກະສານອ້າງອີງ**

ສົມທະເພີຍ ສີວົງສັກ ແລະ ອໍາໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ. ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ.

ດວງເດືອນ ບຸນຍາວົງ; ໂອທອງ ຄໍາອິນຊູ ແລະ ສົມໄພ ວິໄລສັກ. (2000). ມະຫາກາບທ້າວຮຸ່ງ-ທ້າວເຈືອງ ເຫຼັ້ມ 1. ຫໍສະໝຸດແຫ່ງຊາດ.

ດວງເດືອນ ບຸນຍາວົງ, ໂອທອງ ຄໍາອິນຊູ, ສົມໄພ ວິໄລສັກ ແລະ ຄໍາສອນ ທອງມີໄຊ. (2003). ມະຫາກາບທ້າວຮຸ່ງ-ທ້າວເຈືອງ ເຫຼັ້ມ 2. ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ.

ຄູສອນປະຈໍາວິຊາ



ປທ.ສົມທະເພີຍ ສີວົງສັກ